**ພັກປະຊາຊົນ ປະຕິວັດລາວ**

**ຄະນະພົວພັນຕ່າງປະເທດສູນກາງພັກ**

# <u>ໂທລະເລກອວຍພອນ</u>

**ເຖິງ:** ສະຫາຍ ຫຼີວ ຈ້ຽນຊາວ, ກຳມະການສູນກາງພັກກອມມູນິດຈີນ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ.

<u>ທີ່ ນະຄອນຫລວງປັກກິ່ງ</u>

ສະຫາຍ ຫຼີວ ຈ້ຽນຊາວ ທີ່ນັບຖື ແລະ ທີ່ຮັກແພງ,

ເນື່ອງໃນໂອກາດບຸນປີໃໝ່ຈີນ 2025, ຕາງໜ້າໃຫ້ ຄະນະພັກ, ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄຳອວຍພອນອັນອົບອຸ່ນ ແລະ ພອນໄຊອັນປະເສີດ ມາຍັງ ສະຫາຍ ແລະ ໂດຍຜ່ານສະຫາຍ ໄປຍັງ ຄະນະພັກ, ຄະນະນຳ ແລະ ພະນັກງານ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ທຸກຖ້ວນໜ້າ.

ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ຜົນງານອັນພົ້ນເດັ່ນ ໃນການເຄື່ອນໄຫວວຽກງານຕ່າງປະເທດ ທີ່ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ຍາດມາໄດ້ ກໍຄື ໝາກຜົນຂອງການພົວພັນຮ່ວມມືລະຫວ່າງ 2 ຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ ໃນຕະຫຼອດ 1 ປີທີ່ຜ່ານມາ, ເຊິ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍການພົວພັນຮ່ວມມືສອງຝ່າຍ ໃຫ້ນັບມື້ນັບກ້າວເຂົ້າສູ່ລວງເລິກ ແລະ ໜັກແໜ້ນກວ່າເກົ່າ. ຂ້າພະເຈົ້າ ມີຄວາມໝັ້ນໝັ້ນຈະຮ່ວມກັບ ສະຫາຍ ກໍຄື ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ສືບຕໍ່ຈັດຕັ້ງຜັນຂະຫຍາຍ ບັນດາເນື້ອໃນຈິດໃຈ ທີ່ການນຳຂັ້ນສູງຂອງ ສອງພັກ, ສອງລັດ ໄດ້ຕົກລົງເປັນເອກະພາບກັນ, ໂດຍສະເພາະແມ່ນ ການຈັດຕັ້ງຜັນຂະຫຍາຍ ແຜນແມ່ບົດ ວ່າດ້ວຍ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໃຫ້ມີຜົນສຳເລັດທີ່ເປັນຮູບປະທຳ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ຈີນ ໃຫ້ຫຼາຍກວ່າເກົ່າ.

ເນື່ອງໃນໂອກາດອັນເບີກບານມ່ວນຊື່ນຕ້ອນຮັບປີໃໝ່ນີ້, ຂໍອວຍພອນໄຊອັນປະເສີດ ມາຍັງ ສະຫາຍ ພ້ອມດ້ວຍຄອບຄົວ ແລະ ບັນດາສະຫາຍຄະນະພັກ, ຄະນະນຳ ແລະ ພະນັກງານຂອງ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ທຸກຖ້ວນໜ້າ ຈົ່ງມີແຕ່ຄວາມຜາສຸກ, ມີພະລານາໄມສົມບູນ ແລະ ປະສົບຜົນສຳເລັດອັນໃໝ່ ໃຫຍ່ຫຼວງກວ່າເກົ່າ ໃນໜ້າທີ່ອັນມີກຽດຂອງຕົນຕະຫຼອດປີໃໝ່ນີ້.

ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊາຕາກຳ ລາວ-ຈີນ ກໍຄື ໄມຕີຈິດມິດຕະພາບ ລະຫວ່າງ ຄະນະພົວພັນຕ່າງປະເທດຂອງສອງສູນກາງພັກ ລາວ-ຈີນ ພວກເຮົາຈົ່ງແຕກດອກອອກຜົນຍິ່ງໆຂຶ້ນ.

ດ້ວຍຄວາມນັບຖືຖານສະຫາຍ,

ນະຄອນຫຼວງວຽງຈັນ, ວັນທີ 24 ມັງກອນ 2025

**ບຸນເຫຼືອ ພັນດານຸວົງ**

**ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ**